**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 145/ນຍ

ນະຄອນຫຼວງວຽງຈັນ, ວັນທີ 08/05/2017

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ເມສາ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1073/ກຊສ, ລົງວັນທີ 22 ມີນາ 2017;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 100 /ພນ, ລົງວັນທີ 25 ເມສາ 2017.

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາວຽກງານຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຽນເປັນຕົວອັກສອນຫຍໍ້ວ່າ “ກຊສ” ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງປະກອບມີທີ່ດິນ, ນ້ຳ, ອາກາດ, ຊີວະນາໆພັນ, ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ລວມທັງວຽກງານໄພພິບັດທຳມະຊາດ ແລະ ການປ້ອງກັນໄພຈາກການປ່ຽນແປງດິນຟ້າອາກາດ, ອຸຕຸນິຍົມ ແລະ ອຸທົກກະສາດໃນຂອບເຂດທົ່ວປະເທດ.

## ໝວດທີ 2

### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ຄົ້ນຄ້ວາ, ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານກ່ຽວກັບວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປາກົດຜົນເປັນຈິງ;
3. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆ ຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
4. ສຳຫຼວດ-ວັດແທກ, ຈັດສັນ, ສ້າງແຜນແມ່ບົດຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນແຫ່ງຊາດ; ສ້າງສຳມະໂນທີ່ດິນ, ຂຶ້ນ ແລະ ຈົດທະບຽນທີ່ດິນ, ປະເມີນມູນຄ່າທີ່ດິນ; ຄຸ້ມຄອງທີ່ດິນຂອງລັດ, ການໃຫ້ເຊົ່າ ແລະ ສຳປະທານທີ່ດິນ ແລະ ຄຸ້ມຄອງຜູ້ປະກອບທຸລະກິດທີ່ດິນ;
5. ຄົ້ນຄ້ວາສ້າງ ແລະ ຈັດຕັ້ງປະຕິບັດ ແຜນການຄຸ້ມຄອງຊັບພະຍາກອນນ້ຳໃນຂອບເຂດທົ່ວປະເທດ; ຄຸ້ມຄອງມະຫາພາກບັນດາອ່າງໂຕ່ງ ພ້ອມທັງກຳນົດນະໂຍບາຍລວມໃນການພັດທະນາ, ຄຸ້ມຄອງອ່າງແມ່ນ້ຳສາຍຫຼັກ, ອ່າງແມ່ນ້ຳສາຂາ ແລະ ອ່າງແມ່ນ້ຳຂ້າມຜ່ານຊາຍແດນລວມທັງ ອ່າງແມ່ນ້ຳທຳມະຊາດ ແລະ ອ່າງແມ່ນ້ຳ ທີ່ເກີດຈາກການພັດທະນາໂຄງການລົງທຶນຂະໜາດໃຫຍ່;
6. ແນະນຳໃຫ້ຂະແໜງການກ່ຽວຂ້ອງດຳເນີນການປະເມີນສິ່ງແວດລ້ອມຍຸດທະສາດ ໄປພ້ອມກັນກັບການກຳນົດນະໂຍບາຍ, ແຜນຍຸດທະສາດ ແລະ ແຜນງານຂອງຂະແໜງການ; ທົບທວນ ແລະ ຮັບຮອງເອົາບົດລາຍງານການປະເມີນສິ່ງແວດລ້ອມແບບຍຸດທະສາດ ຂອງຂະແໜງການ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ລວມທັງດຳເນີນວຽກງານການມີສ່ວນຮ່ວມຂອງມວນຊົນ ຕາມລະບຽບຫຼັກການ;
7. ຄຸ້ມຄອງ, ສົ່ງເສີມ ແລະ ສ້າງຈິດສຳນຶກໃນການປົກປັກຮັກສາສິ່ງແວດລ້ອມ ແລະ ກຳນົດແຜນການຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ;
8. ປ້ອງກັນ, ຄວບຄຸມມົນລະພິດທາງອາກາດ, ນ້ຳ, ດິນ, ສຽງ, ແສງ, ສີ ແລະ ກິ່ນ ຈາກແຫຼ່ງປ່ອຍ ແລະ ແຫຼ່ງທົ່ວໄປ; ຄຸ້ມຄອງການນຳໃຊ້ສານເຄມີທີ່ເປັນພິດ, ວັດຖຸອັນຕະລາຍ, ສິ່ງເສດເຫຼືອອັນຕະລາຍ ແລະ ສິ່ງເສດເຫຼືອອື່ນໆ, ສຳຫຼວດ ແລະ ເກັບກຳຂໍ້ມູນກ່ຽວກັບມົນລະພິດ; ວາງແຜນ, ປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂເຫດການສຸກເສີນ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນຂອບເຂດທົ່ວປະເທດ;
9. ເປັນໃຈກາງປະສານງານໃນວຽກງານຫຼຸດຜ່ອນຄວາມສ່ຽງ, ສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບສະພາບໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ພ້ອມທັງເປັນຈຸດໃຈກາງໃນການແຈ້ງເຕືອນໄພລ່ວງໜ້າ ກ່ອນເກີດມີເຫດການໄພພິບັດຕ່າງໆ;
10. ປັບປຸງ ແລະ ສ້າງຄວາມກຽມພ້ອມໃນການນຳໃຊ້ ຕາໜ່າງສະຖານີອຸຕຸການບິນ, ຕາໜ່າງສະຖານີອຸຕຸກະເສດ; ຍົກລະດັບ ແລະ ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ, ສະຖານີຕິດຕາມແຜ່ນດິນໄຫວ ເພື່ອເຮັດການບໍລິການຂໍ້ມູນຂ່າວສານລວມທັງ ການເຮັດພະຍາກອນ ແລະ ການແຈ້ງເຕືອນໄພລ່ວງໜ້າ ໃຫ້ແກ່ສັງຄົມ, ການຄົມມະນາຄົມທາງອາກາດ ແລະ ການຜະລິດກະສິກຳ;